**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ..28..../ນຍ

ນະຄອນຫຼວງວຽງຈັນ, ວັນທີ..16.08.2016

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຕໍ່ການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຢູ່ ແຂວງພາກເໜືອ, ສປປ ລາວ

ເຖິງ: ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການອ້ອມຂ້າງສູນກາງ, ບັນດາທ່ານເຈົ້າແຂວງຫຼວງພະບາງ, ຫົວພັນ, ຜົ້ງສາລີ ແລະ ແຂວງທີ່ມີຄວາມສ່ຽງ ຕໍ່ການລະບາດຕັກແຕນຝູງໄມ້ປ່ອງ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມສົນທິສັນຍາປ້ອງກັນພືດສາກົນ ທີ່ ສປປ ລາວ ເປັນພາຄີ.

ອີງໃສ່ສະພາບທີ່ຕັ້ງພູມສັນຖານ ແລະ ການປ່ຽນແປງຂອງດິນຟ້າອາກາດ ເຮັດໃຫ້ເກີດມີການລະບາດຂອງຕັກແຕນຝູງໄມ້ປ່ອງ ຢູ່ ແຂວງຫຼວງພະບາງ, ແຂວງຫົວພັນ ແລະ ແຂວງຜົ້ງສາລີ ໃນປີ 2015 ຜ່ານມາ, ຊຶ່ງໄດ້ສ້າງຄວາມເສຍຫາຍຕໍ່ພື້ນທີ່ປູກເຂົ້າໄຮ່, ສາລີ ແລະ ພືດອື່ນໆ ຂອງປະຊາຊົນຈຳນວນ 3,651 ເຮັກຕາ ກວມເອົາ 112 ບ້ານ, 7 ເມືອງ ແລະ ປະຊາຊົນໄດ້ຮັບຜົນກະທົບ ມີ 3,359 ຄອບຄົວ ແລະ 20,367 ຄົນ. ຕໍ່ສະພາບການດັ່ງກ່າວ, ລັດຖະບານ ໄດ້ຊີ້ນຳຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ, ແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ແລະ ໜູຂີ ຢູ່ ແຂວງຫຼວງພະບາງ ແລະ ບາງແຂວງພາກເໜືອ, ພ້ອມດຽວກັນນັ້ນ ກໍ່ໄດ້ອອກແຈ້ງການ ໃຫ້ຄະນະກຳມະການສະເພາະກິດ ແລະ ບັນດາເຈົ້າແຂວງ ໃນ 3 ແຂວງ ເປົ້າໝາຍ ຖືເປັນວາລະສຳຄັນ ຂອງຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເອົາໃຈໃສ່ໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ດ້ວຍຫຼາຍວິທີການ ໂດຍສະເພາະແມ່ນການນຳໃຊ້ພູມປັນຍາຊາວບ້ານ ເຊັ່ນ : ຈູດເສດພືດຕ່າງໆເພື່ອຂັບໄລ່, ໃຊ້ຕາໜ່າງກວດ ແລະ ເກັບທຳລາຍຖິ້ມ ແລະ ນຳໃຊ້ຢາປາບສັດຕູພືດທີ່ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ສີດພົ່ນຕາມພື້ນທີ່ພົບເຫັນຝູງຕັກແຕນ. ເຖິງຢ່າງໃດກໍ່ຕາມ, ມາຮອດເດືອນ ພຶດສະພາ (5) ປີ 2016 ໄດ້ສຳຫຼວດເຫັນຈຸດວາງໄຂ່ຕັກແຕນແຕກເປັນໂຕອ່ອນ ຈຳນວນ 450 ຈຸດ, ກວມເອົາ 188 ບ້ານ ແລະ 14 ເມືອງ, ຖ້າທຽບໃສ່ການສຳຫຼວດຈຸດວາງໄຂ່ໃນ ເດືອນ 11 ປີ 2015 ເພີ່ມຂຶ້ນ 310 ຈຸດ ຫຼື 3 ເທົ່າຕົວ ແລະ ມາຮອດປະຈຸບັນ ເດືອນກໍລະກົດ (7) ນີ້ ໄດ້ມີພື້ນທີ່ຖືກທຳລາຍຈຳນວນ 3,710 ເຮັກຕາ. ຄາດຄະເນວ່າການລະບາດຂອງຕັກແຕນຝູງໄມ້ປ່ອງ ມີທ່າອ່ຽງຈະສືບຕໍ່ຂະຫຍາຍໄປໃນພື້ນທີ່, ເມືອງ ແລະ ແຂວງ ໃກ້ຄຽງອື່ນ, ເນື່ອງຈາກວ່າ ລະບົບນິເວດວິທະຍາເໝາະສົມ ເຊັ່ນ: ພື້ນທີ່ປ່າໄມ້

ປ່ອງ, ເຂົ້າໄຮ່, ສາລີ ແລະ ອື່ນໆ ທີ່ເປັນແຫຼ່ງອາຫານ ແລະ ເປັນເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການຂະຫຍາຍປະຊາກອນຂອງຕັກແຕນຝູງໄມ້ປ່ອງ.

ການລະບາດຂອງຕັກແຕນຝູງໄມ້ປ່ອງ ຖືເປັນຜົນກະທົບທີ່ຮ້າຍແຮງຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ, ຄວາມສະຫງົບເປັນລະບຽບຮຽບຮ້ອຍໃນສັງຄົມ ໂດຍສະເພາະແມ່ນ 3 ແຂວງພາກເໜືອ. ສະນັ້ນ, ເພື່ອເປັນການປ້ອງກັນ ແລະ ກຳຈັດ ຕັກແຕນຝູງໄມ້ປ່ອງ ໃຫ້ທັນການ ແລະ ປົກປ້ອງຜົນເສຍຫາຍທີ່ຈະເກີດຂຶ້ນນັ້ນ,

**ນາຍົກລັດຖະມົນຕີ ອອກຄຳສັ່ງ:**

1. ໃຫ້ບັນດາກະຊວງ, ອົງການອ້ອມຂ້າງສູນກາງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ທະຫານ, ຕຳຫຼວດ, ປະຊາຊົນ ແລະ ຊັ້ນຄົນຕ່າງໆ ເພີ່ມທະວີຄວາມຮັບຜິດຊອບ ໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຢູ່ບັນດາແຂວງພາກເໜືອ ໃຫ້ເປັນຂະບວນການຟົດຟື້ນ;
2. ໃຫ້ຄະນະກຳມະການສະເພາະກິດເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໂຄສະນາເຜີຍແຜ່, ປຸກລະດົມທົ່ວປວງຊົນດ້ວຍການປຸກຈິດສຳນຶກ ໃຫ້ການຈັດຕັ້ງບ້ານ ແລະ ປະຊາຊົນ ຮູ້ຈັກຜົນຮ້າຍ, ມີສະຕິລະວັງຕົວ ແລະ ເປັນເຈົ້າການ ໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ດ້ວຍຜ່ານຫຼາຍຮູບການ ເຊັ່ນ: ພະນັກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດ, ຄູອາຈານ, ໂທລະພາບ, ໜັງສືພິມ, ວິທະຍຸ ແລະ ໂທລະໂຄ່ງປະຈຳບ້ານ. ພ້ອມດຽວກັນນັ້ນ, ກໍ່ລາຍງານຂໍ້ມູນຂ່າວສານ ກ່ຽວກັບຂະບວນການ ແລະ ສະພາບການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງຢູ່ໃນແຕ່ລະທ້ອງຖິ່ນ ໃຫ້ການຈັດຕັ້ງທຸກຂັ້ນ ແລະ ສັງຄົມ ຮັບຊາບ ແລະ ທ່ວງທັນກັບເວລາ;
3. ໜ້າທີ່ ແລະ ຄາດໝາຍຂອງການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ມີດັ່ງນີ້:
   3.1 ຄາດໝາຍລວມ : ຕ້ອງປຸກລະດົມກຳລັງແຮງສັງລວມທົ່ວຂະແໜງການ, ບັນດາອົງການ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ຊັ້ນຄົນຕ່າງໆ ແລະ ປະຊາຊົນເຂົ້າຮ່ວມກຳຈັດຕັກແຕນນຝູງໄມ້ປ່ອງ ເປັນຕົ້ນໃນເຂດທີ່ເກີດລະບາດຕັກແຕນຝູງໄມ້ປ່ອງ, ພ້ອມທັງຂົນຂວາຍ ແລະ ຍາດແຍ່ງການສະໜັບສະໜູນຂອງນັກທຸລະກິດພາຍໃນ ແລະ ປະເທດເພື່ອນມິດ, ບັນດາອົງການຈັດຕັ້ງສາກົນ ເຂົ້າຮ່ວມໃນການປ້ອງກັນ ແລະ ກຳຈັດ ເພື່ອເຮັດໃຫ້ສະພາບການລະບາດ ກັບເຂົ້າສູ່ຄວາມປົກກະຕິໂດຍໄວ, ຮັບປະກັນເຮັດໃຫ້ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຕໍ່ເນື່ອງ, ມີຄວາມໝັ້ນຄົງທາງດ້ານສະບຽງອາຫານ, ມີຄວາມສະຫງົບລະບຽບຮຽບຮ້ອຍໃນສັງຄົມໂດຍພື້ນຖານ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ຢູ່ໃນເຂດພື້ນທີ່ລະບາດມີຄວາມສະຫງົບປົກກະຕິ;
   3.2 ໜ້າທີ່ຈຸດສຸມ:
   - ສຶກສາ, ຄົ້ນຄວ້າ ກ່ຽວກັບຊີວະວິທະຍາ (ວົງຈອນຊີວິດ), ລະບົບນິເວດວິທະຍາ ແລະ ເຕັກນິກການປ້ອງກັນ ແລະ ກຳຈັດ;
   - ສືບຕໍ່ຕິດຕາມ, ເຝົ້າລະວັງ ພຶດຕິກຳການເຄື່ອນຍ້າຍຝູງ ແລະ ສະຖານທີ່ການວາງໄຂ່ ເພື່ອເປັນບ່ອນອີງ ໃນການກຳນົດມາດຕະການປ້ອງກັນ ແລະ ກຳຈັດ;
   - ຝຶກອົບຮົມວິຊາການ ໃຫ້ທ້ອງຖິ່ນ ກ່ຽວກັບການສຳຫຼວດ, ເຝົ້າລະວັງ ແລະ ການປ້ອງກັນ ແລະ ກຳຈັດ;

- ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ ແລະ ເຄື່ອງມືອຸປະກອນ ຮັບໃຊ້ເຂົ້າໃນການປ້ອງກັນ ແລະ ກຳຈັດ;
- ຊຸກຍູ້,ສົ່ງເສີມປະຊາຊົນຟື້ນຟູການຜະລິດເພື່ອທົດແທນຜົນເສຍຫາຍຈາກການລະບາດຂອງຕັກແຕນ ຝູງໄມ້ປ່ອງ;
- ສ້າງສູນປະສານງານກ່ຽວກັບການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຢູ່ແຂວງຫຼວງພະບາງ.

4. ເພີ່ມທະວີຄວາມຮັບຜິດຊອບຂອງບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ເກີດຜົນເປັນຈິງ ດັ່ງນີ້ :

4.1 ກະຊວງກະສິກຳ ແລະ ປ່າໄມ້ ໃນຖານະເປັນຫົວໜ້າຄະນະກຳມະການສະເພາະກິດເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນຝູງໄມ້ປ່ອງ ເປັນໃຈກາງ, ເປັນເຈົ້າການສົມທົບກັບຂະແໜງການ, ອົງການປົກຄອງແຂວງ ໂດຍສະເພາະ ແມ່ນ 3 ແຂວງເປົ້າໝາຍ ແລະ 7 ແຂວງ ທີ່ມີຄວາມສ່ຽງ ເພື່ອກຳນົດແຜນປະຕິບັດງານ ໄລຍະສັ້ນ (ທ້າຍປີ 2016); ໄລຍະກາງ (ປີ 2017) ແລະ ໄລຍະຍາວ (2018-2020), ສ້າງ ແລະ ຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ໄດ້ຮັບຜົນສຳເລັດ;

4.2 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສຶກສາ, ຄົ້ນຄວ້າທາງດ້ານວິທະຍາສາດ ກ່ຽວກັບຄວາມເປັນມາ, ສາເຫດ ແລະ ປັດໃຈເອື້ອອຳນວຍ ທີ່ພາໃຫ້ເກີດມີການລະບາດຕັກແຕນຝູງໄມ້ປ່ອງ ເພື່ອກຳນົດແຜນຍຸດທະສາດ ແລະ ມາດຕະການປ້ອງກັນ ແລະ ກຳຈັດໃຫ້ມີປະສິດທິພາບ ແລະມີຜົນກະທົບໜ້ອຍທີ່ສຸດຕໍ່ເສດຖະກິດ-ສັງຄົມ ແລະສິ່ງແວດລ້ອມ;

4.3 ໃຫ້ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ໂຄສະນາເຜີຍແຜ່ທາງໂທລະພາບ, ວິທະຍຸ ແລະ ສື່ອື່ນໆ ພ້ອມທັງແນະນຳ ແລະ ໃຫ້ຄວາມຮູ້ທົ່ວໄປທີ່ຖືກຕ້ອງໃຫ້ແກ່ປະຊາຊົນໃນການເປັນເຈົ້າການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ;

4.4 ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ຕິດຕາມ ແລະ ເກັບກຳຂໍ້ມູນຕ່າງໆ ເພື່ອປະເມີນຜົນເສຍຫາຍ, ກຳນົດມາດຕະການ ແລະ ວິທີການທີ່ເໝາະສົມ ເພື່ອບັນເທົາ ແລະ ແກ້ໄຂຜົນກະທົບຕົວຈິງ ຈາກການລະບາດຂອງຕັກແຕນຝູງໄມ້ປ່ອງ;

4.5 ໃຫ້ກະຊວງການເງິນ ຄົ້ນຄ້ວາ, ຈັດສັນງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ໃຫ້ທັນກັບສະພາບການໃນແຕ່ລະໄລຍະ;

4.6 ໃຫ້ກະຊວງການຕ່າງປະເທດ ປະສານງານກັບອົງການຈັດຕັ້ງສາກົນ ແລະ ບັນດາປະເທດອາຊຽນໃນການແລກປ່ຽນຂໍ້ມູນຂ່າວສານ, ຍາດແຍ່ງການຊ່ວຍເຫຼືອເຂົ້າໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ;

4.7 ໃຫ້ກະຊວງສາທາລະນະສຸກ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເຂົ້າຮ່ວມຂະບວນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

4.8 ໃຫ້ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້ານະໂຍບາຍ ແລະ ຊີ້ນຳບັນດາທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຊີ້ນຳຂອງຕົນ ເຂົ້າຮ່ວມ ແລະ ສະໜອງສິນເຊື່ອໃຫ້ແກ່ເມືອງ, ບ້ານ ແລະ ຄອບຄົວເປົ້າໝາຍ ເພື່ອຟື້ນຟູຊີວິດການເປັນຢູ່ ໃຫ້ມີຄວາມສະຫງົບປົກກະຕິ;

4.9 ໃຫ້ເຈົ້າແຂວງຫຼວງພະບາງ, ແຂວງຫົວພັນ ແລະ ແຂວງຜົ້ງສາລີ ສືບຕໍ່ເປັນເຈົ້າການຮັບຜິດຊອບຊີ້ນຳ-ນຳພາຈັດຕັ້ງປະຕິບັດ ພ້ອມທັງລະດົມທຸກກຳລັງແຮງທາງດ້ານທຶນຮອນ, ງົບປະມານ, ກຳລັງພົນ ແລະ ເຄື່ອງມືອຸປະກອນ ຮັບໃຊ້ເຂົ້າໃນຂະບວນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ

ໃນທ້ອງຖິ່ນຂອງຕົນ ເປັນຕົ້ນ ປຸກລະດົມ ຂຸດຄົ້ນນຳໃຊ້ພູມປັນຍາຂອງທ້ອງຖິ່ນ, ມູນເຊື້ອຂອງປະຊາຊົນ ໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດ, ພ້ອມດຽວກັນນັ້ນ, ໃຫ້ບັນດາເຈົ້າແຂວງກວດກາຄືນການຈັດຕັ້ງປະຕິບັດ ຂອງຄະນະຮັບຜິດຊອບຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ ໃຫ້ແທດເໝາະກັບຄວາມເປັນຈິງ. ການຈັດຕັ້ງຊີ້ນຳຂັ້ນແຂວງແມ່ນມອບໃຫ້ເຈົ້າແຂວງ ແລະ ຂັ້ນເມືອງແມ່ນມອບໃຫ້ເຈົ້າເມືອງ ຫຼື ຮອງເຈົ້າເມືອງ ເປັນຫົວໜ້າຄະນະ;

4.10 ໃຫ້ເຈົ້າແຂວງໄຊຍະບູລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຊຽງຂວາງ, ວຽງຈັນ ແລະ ແຂວງໄຊສົມບູນ ທີ່ມີພື້ນທີ່ຄວາມສ່ຽງຕໍ່ການລະບາດຂອງຕັກແຕນຝູງໄມ້ປ່ອງ ເປັນເຈົ້າການຕິດຕາມ ແລະ ເຝົ້າລະວັງຢ່າງເປັນປົກກະຕິ. ໃນກໍລະນີພົບເຫັນການເຄື່ອນຍ້າຍ ຫຼື ປະກົດເຫັນຕັກແຕນຝູງໄມ້ປ່ອງເຂົ້າມາໃນພື້ນທີ່ຂອງຕົນຕ້ອງຮີບຮ້ອນລາຍງານ ຕໍ່ຄະນະກຳມະການສະເພາະກິດ ເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ຢູ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ;

5. ໃຫ້ລັດຖະມົນຕີ, ຫົວໜ້າອົງການອ້ອມຂ້າງສູນກາງ, ຄະນະກຳມະການສະເພາະກິດເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ແລະ ເຈົ້າແຂວງ ຄົ້ນຄວ້າ, ກຳແໜ້ນ ຄຳສັ່ງສະບັບນີ້ ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກອັນລະອຽດ ຕາມຄວາມຮັບຜິດຊອບຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;

6. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**